# ຊຸດອຸປະກອນ ປ້ອງກັນຕົນເອງ

## ຂັ້ນພື້ນຖານ



# ຫຼັກການປະຕິບັດ ການເກັບຊາກສັດປ່າ

ກໍລະນີຊາກສັດນ້ອຍ, ສາມາດບັນຈຸໃສ່ໃນຖົງຢາງທີ່ກຽມມາ ແລະ ໃຫ້ນຳສົ່ງຊາກສັດຫາ ຫ້ອງການພາກສະໜາມໂດຍໄວທີ່ສຸດ ເພື່ອເກັບຊາກສັດໄວ້ໃນຄວາມເຢັນ.




ປີ້ນຖົງຢາງດ້ານໃນກວມເອົາມືຂອງທ່ານ.




ຈາກນັ້ນ, ໄປຈັບເອົາຊາກສັດປ່າ ແລ້ວ ປີ້ນຖົງຢາງກັບຄືນກວມເອົາຊາກສັດປ່າ.




ມ້ວນຖົງຊາກສັດປ່າ ເພື່ອໄລ່ອາກາດອອກ ໃຫ້ໝົດ ປິດປາກຖົງ ຫຼື ມັດປາກຖົງໃຫ້ແໜ້ນ ໂດຍໃຫ້ຫ່າງຈາກໂຕທ່ານ.




ເອົາຊາກສັດປ່າທີ່ບັນຈຸຢູ່ໃນຖົງຢາງ ໃສ່ໃນຖົງຢາງຊັ້ນທີ2; ມ້ວນໄລ່ອາກາດອອກປິດປາກຖົງໃຫ້ແໜ້ນ.







ເອົາຊາກສັດປ່າທີ່ບັນຈຸຢູ່ໃນຖົງຢາງ 2 ຊັ້ນໃສ່ໃນຖົງຢາງຊັ້ນທີ 3, ພ້ອມເອົາ "ແບບພິມບັນທຶກເຫດການສັດປ່າເຈັບ ຫຼື ຕາຍ ແລະ ແບບພິມບັນທຶກ ການເກັບຕົວຢ່າງສັດປ່າ" ທີ່ຕື່ມຂໍ້ມູນຄົບຖ້ວນແລ້ວ; ໃສ່ໃນຖົງຊາກສັດປ່າຊັ້ນທີ 3, ມ້ວນຖົງໄລ່ອາກາດອອກ, ປິດປາກຖົງໃຫ້ແໜ້ນ.

# ຫຼັກການປະຕິບັດການຫຸ້ມຫໍ່ ຕົວຢ່າງ ແລະ ຊາກສັດປ່າ ເພື່ອຈັດສົ່ງຫ້ອງວິໄຈ




ປູຖົງຢາງທີ່ໜາ(ຫຼືຖົງຢາງດຳໃສ່ຂີ້ເຫຍື້ອ) ລົງໃນກ່ອງໂຟມ.




ເອົາຜ້າ ຫຼື ວັດຖຸທີ່ສາມາດດູດຊັບຂອງແຫຼວ ໃສ່ໃນຖົງຢາງເພື່ອດູດຊັບນ້ຳຫຼືທາດແຫຼວ ທີ່ອາດຈະໄຫຼອອກມາ ໃນຂະນະຂົນສົ່ງ.







ຈາກນັ້ນ, ນຳຊາກສັດປ່າ ຫຼື ຕົວຢ່າງທີ່ຖືກບັນຈຸຢູ່ໃນຖົງທີ່ປິດປາກຢ່າງດີຈຳນວນສາມຊັ້ນ ວາງລົງໃນຖົງຢາງ ພ້ອມກັບຖົງ ຫຼື ຕຸກນ້ຳກ້ອນທີ່ມີຝາປິດຢ່າງດີ (ຕ້ອງໝັ້ນໃຈວ່າການລະລາຍຂອງນ້ຳກ້ອນ ຈະບໍ່ສາມາດຊຶມເຂົ້າຖົງຊາກສັດປ່າໄດ້).




ອັດປາກຖົງຢາງ ແລະ ມັດດ້ວຍເຊືອກ ໃຫ້ແໜ້ນ.




ປິດຝາກ່ອງໂຟມແລະຕິດທັບປາກຝາ ແລະ ກ້ຽວອ້ອມກ່ອງໂຟມດ້ວຍສະກ໋ອດແຜ່ນໃຫຍ່.

ຕິດປ້າຍສັນຍາລັກ UN3373 ໃສ່ກ່ອງໂຟມ; ຕິດລາຍລະອຽດຊື່ຜູ້ສົ່ງ-ຜູ້ຮັບ, ສະຖານທີ່ ແລະ ເບີໂທຕິດຕໍ່.

Wild Health Net

BTRP

WCS

# ການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ

ຊອກຫາສະຖານທີ່ສະອາດ ແລະປອດໄພ ໃນການສວມໃສ່ຊຸດອຸປະກອນປ້ອງກັນຕົນເອງ, ໃຫ້ຫ່າງຈາກຈຸດສັດເຈັບປ່ວຍ ຫຼື ຕາຍ ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານທີ່ໜ່ວຍງານລາດຕະເວນປ່າ ຕ້ອງສວມໃສ່ໃນເວລາປະຕິບັດວຽກ ທີ່ມີການສຳຜັດກັບສັດ ປະກອບມີ:




# ຂັ້ນຕອນການຖອດຊຸດອຸປະກອນ ປ້ອງກັນຕົນເອງ ຂັ້ນພື້ນຖານ

ໃຫ້ຄຳນຶງວ່າທຸກອຸປະກອນທີ່ທ່ານສວມໃສ່ ພາຍຫຼັງມີການສຳຜັດກັບສັດ, ດ້ານນອກອາດປົນເປື້ອນດ້ວຍເຊື້ອພະຍາດ. ໃຫ້ກຳນົດເອົາສະຖານທີ່ສະເພາະໃດໜຶ່ງທີ່ຫ່າງຈາກຊາກສັດ ເພື່ອຖອດຊຸດອຸປະກອນປ້ອງກັນຕົນເອງ, ທຸກຄົນຄວນໄປຖອດຢູ່ສະຖານທີ່ດຽວກັນ ແລະ ຕ້ອງຖອດແຕ່ລະອຸປະກອນ ຢ່າງລະມັດລະວັງ ຕາມລຳດັບດັ່ງລຸ່ມນີ້:

1



ລ້າງຂ້າເຊື້ອຖົງມືຊັ້ນນອກດ້ວຍເຈວລ້າງມືທີ່ມີທາດເຫຼົ້າຢ່າງຕ່ຳ 60%.

2



ຖອດຖົງມືຊັ້ນນອກອອກ,

3



ຖອດແວ່ນຕາປ້ອງກັນ ຫຼື ແຜ່ນຢາງປ້ອງກັນໃບໜ້າ.



ລ້າງທຳຄວາມສະອາດແວ່ນຕາດ້ວຍນ້ຳຢາຂ້າເຊື້ອ ແລະ ສາມາດນຳກັບມາໃຊ້ຄືນໃໝ່.

4



ຖອດຜ້າອັດປາກ - ດັງ ຢ່າງລະມັດລະວັງ ບໍ່ໃຫ້ໄປຖືກພາກສ່ວນໃດຂອງຮ່າງກາຍທ່ານ, ແລ້ວຖິ້ມລົງຖົງຂີ້ເຫຍື້ອອັນຕະລາຍ.

5



ຖອດຖົງມືຊັ້ນໃນ, ຖິ້ມລົງຖົງຂີ້ເຫຍື້ອອັນຕະລາຍ.

6



ປິດປາກຖົງຂີ້ເຫຍື້ອອັນຕະລາຍ.

7



ລ້າງມືດ້ວຍສະບູ(ຖ້າມີ) ຫຼື ເຈວລ້າງມືທີ່ມີທາດເຫຼົ້າຢ່າງຕ່ຳ60%.